# ຂໍ້ຫ້າມສຳລັບນັກທຸລະກິດ







## ກົດໝາຍວ່າດ້ວຍປ່າໄມ້ ມາດຕາ101.

### ຫ້າມນັກທຸລະກິດພາຍໃນ ແລະ ຕ່າງປະເທດ ມີພຶດຕິກຳດັ່ງນີ້:

1. ດຳເນີນການສຳຫຼວດປ່າໄມ້, ສັງລວມຍອດປ່າໄມ້, ຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ ເວັ້ນເສຍແຕ່ໄດ້ຮັບອະນຸຍາດ;
2. ສ້າງຕັ້ງໂຮງເລື່ອຍ, ໂຮງເລື່ອຍ, ໂຮງເຟີນີເຈີ ແລະ ໂຮງງານປຸງແຕ່ງໄມ້ ແລະ ເຄື່ອງປ່າຂອງດົງ ໂດຍບໍ່ໄດ້ຮັບອະນຸຍາດ ແລະ ຢູ່ໃນ ຫຼື ຢູ່ໃກ້ ປ່າໄມ້ທຸກປະເພດ;
3. ບຸກລຸກທຳລາຍປ່າໄມ້ ແລະ ສັງລວມຍອດປ່າໄມ້ ໃນເຂດຫວງຫ້າມເດັດຂາດ ຂອງປ່າປ້ອງກັນ ແລະ ປ່າສະຫງວນ, ເຂດເຊື່ອມຕໍ່ ລະຫວ່າງ ປ່າສະຫງວນດ້ວຍກັນ ຫຼື ລະຫວ່າງ ປ່າສະ ຫງວນ, ປ່າໄມ້ປະເພດອື່ນ ແລະ ເຂດອື່ນໆ;
4. ຈັບຈອງ ດິນໄມ້, ປ່າໄມ້ ຫຼື ເຄື່ອງປ່າຂອງດົງ ແລະ ທີ່ດິນປ່າໄມ້, ຕັດໄມ້ຜິດແຜນ ແຜນການຂຸດຄົ້ນໄມ້ຂອງສົກປີຜ່ານມາ ແລະ ຕັດໄມ້ກ່ອນໄດ້ຮັບອະນຸຍາດ;
5. ບຸກເບີກປ່າໄມ້ ແລະ ທີ່ດິນປ່າໄມ້ ນອກເຂດທີ່ອະນຸຍາດ;
6. ຍ້າຍ, ປ່ຽນແປງ ຫຼື ທຳລາຍ ເຄື່ອງໝາຍເຂດແດນປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ;
7. ນຳເຂົ້າໂຮງງານ, ພາຫະນະລາກແກໄມ້, ເຄື່ອງຈັກ ແລະ ອຸປະກອນ ຂຸດຄົ້ນໄມ້ ໂດຍບໍ່ໄດ້ຮັບ ອະນຸຍາດ;
8. ຕັດ, ຊື້-ຂາຍ ແລະ ເຄື່ອນຍ້າຍ ໄມ້ທຳມະຊາດ ປະເພດຫວງຫ້າມ ແລະ ໄມ້ທີ່ເຂດທີ່ໃກ້ສູນພັນ ໂດຍບໍ່ໄດ້ຮັບອະນຸຍາດຈາກລັດຖະບານ ເຊັ່ນ: ໄມ້ດູ່ລາຍ, ໄມ້ຂະຍຸງ, ໄມ້ປະດົງ, ໄມ້ຄຳພີ້, ໄມ້ໄຄ່ງເລ່ງ, ໄມ້ຈັນປາປາ;
9. ເຄື່ອນຍ້າຍໄມ້ ແລະ ເຄື່ອງປ່າຂອງດົງ ເກີນກຳນົດ, ເກີນຈຳນວນ, ເກີນຂະໜາດ ແລະ ໃນໄລຍະເວລາທີ່ ເກືອດຫ້າມ ຫຼື ບໍ່ຖືກກັບເອກະສານ;
10. ຊື້ຈ້າງ, ໃຫ້ສິນບົນແກ່ພະນັກງານ, ເຈົ້າໜ້າທີ່ ແລະ ປະຊາຊົນ;
11. ປອມແປງເອກະສານ, ຕາປະທັບ ແລະ ຄ້ອນຕີກາໄມ້;
12. ໃຊ້ຄວາມຮຸນແຮງ ແລະ ແອບອ້າງສິ່ງອື່ນ ເພື່ອນາບຂູ່ ພະນັກງານ, ເຈົ້າໜ້າທີ່ ຫຼື ປະຊາ ຊົນ;
13. ພຶດຕິກຳອື່ນທີ່ເປັນຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

4


ຊີດເຊ-ລາວ

ສຳນັກງານຕັ້ງຢູ່ບ້ານ ສະພັງມຶກ, ເຮືອນເລກທີ 244 ໜ່ວຍ 16,
ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ເບີໂທ: 021453995,
ແຟັກ: 021453995, ຕູ້ປ.ນ 2795, ອີເມວ: cdeaoml@cdelao.org

ອອກແບບໂດຍ: ແສງລີ້ ວົງພະຈັນ
Graphic designer: Mr. Songlier VONGPHACHANH
856-20 22084073, 55606...